Vang et al. (2023). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 9. Issue 4. Oct – Dec 2023. Page 384 – 393

# ການສຶກສາຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ (E- Learning) ໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ

**ຄຳມີ ວ່າງ[1], ທອງທ່ຽນ ວັດທະນາວົງ[1*], ຄຳຊາຍ ຈັນທະທິງ[1] ເກດສະລິນ ລຳໄພພັນ[1], ພັນທະມະນັດ ປະທຸມວັນ[1] ແລະ ເວດ ມະນີໄຊ ສີສຸພັນ[2]**

*ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ, ສປປ ລາວ*

***ຊື່ຜູ້ຕິດຕໍ່ພົວພັນ:** *ທອງທ່ຽນ ວັດທະນາວົງ, ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, ເບີໂທ: +856 205429 9659, ອີເມວ: tthiane@gmail.com*

*[1]ຄະນະສຶກສາສາດ, ມະຫາວິທະຍາໄລ ສຸພານຸວົງ*

*[2]ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດລາວ*

***ຂໍ້ມູນບົດຄວາມ:***

*ການສົ່ງບົດ: 22 ມິຖຸນາ 2023*

*ການປັບປຸງ: 13 ທັນວາ 2023*

*ການຕອບຮັບ: 18 ທັນວາ 2023*

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ 1) ເພື່ອສຶກສາສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ, 2) ເພື່ອພັດທະນາຄຸນນະພາບບົດຮຽນ E- Learning ໃນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ. ກຸ່ມຕົວຢ່າງເປັນອາຈານຈຳນວນ 56 ຄົນ ແລະ ນັກສຶກສາຈຳນວນ 97 ຄົນ ຈາກຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ໂດຍໃຊ້ເທັກນິກການເລືອກແບບງ່າຍດາຍ. ໃຊ້ວິທີວິທະຍາການຄົ້ນຄວ້າແບບສຳຫຼວດເຊິ່ງເປັນການໃຊ້ ວິທີການທາງດ້ານປະລິມານ. ເຄື່ອງມືທີ່ໃຊ້ເປັນແບບສອບຖາມ. ສະຖິຕິທີ່ໃຊ້ແມ່ນຄ່າ ເປີເຊັນ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ, ດັດສະນີຄວາມຕ້ອງການຈຳເປັນ (Modified Priority Needs Index: $PNI_{modified}$), ຄ່າທົດສອບທີ (independent sample t-test).

ຜົນການຄົ້ນຄວ້າພົບວ່າ 1) ເພື່ອສຶກສາສະພາບປັດຈຸບັນໃນການນຳເອົາບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ຢູ່ໃນລະດັບປານກາງ ແລະ ຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ ຢູ່ໃນລະດັບຫຼາຍ ເມື່ອລຽງລຳດັບຄວາມສຳຄັນຂອງຄວາມຕ້ອງການຈຳເປັນແລ້ວລຳດັບທີ 1 ແມ່ນຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ. ລຳດັບທີ 2 ແມ່ນດ້ານການຈັດລະບົບການຮຽນການສອນ E-Learning. ລຳດັບທີ3 ແມ່ນດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning ແລະ ລຳດັບທີ 4 ແມ່ນດ້ານການຈັດກິດຈະກຳການຮຽນການສອນ E-Learning ແລະ 2) ຄຸນນະພາບບົດຮຽນ E-Learning ທີ່ພັດທະນາຂຶ້ນມີຄວາມສອດຄ່ອງ ແລະ ມີຄວາມເໝາະສົມ ດ້ວຍລະດັບຄວາມເຊື່ອໝັ້ນທັງສະບັບ (Cronbach's Alpha Coeffecient) ເທົ່າກັບ 0.85

**ຄຳສັບສຳຄັນ:** *ບົດຮຽນ E-Learning, ວິຊາສະຖິຕິສຳລັບການວິໄຈ, ຄວາມຕ້ອງການຈຳເປັນ.*

# The Needs Assessment to Application of E-learning in Teaching and Learning Statistics for Research.

**Khammy Vang [1], Thongthiane Vathanavong[1*], Khamxay Chanthahong[1]**
**Ketsalinh Lamphaiphanh[1], Phanthamanath Pathoumvanh[1] and Vetmanysay Sisouphanh[2]**
*Faculty of education, Souphanouvong University, Lao PDR*

***Correspondence:**
*Thongthiane Vathanavong, Tel: 020-5429 9659, E-mail: tthiane@gmail.com*
*[1] Faculty of education, Souphanouvong University*
*[2]Faculty of Engineering, National University of Laos*

***Article Info:***
*Submitted: Jun 22, 2023*
*Revised: Dec 13, 2023*
*Accepted: Dec 18, 2023*

**Abstract**

The purposes of this research were: 1) to study the state of the problems of teaching and learning for lecturers and undertake a needs assessment for applying E-Learning in teaching and learning statistics for research; and 2) to quality develop of E-Learning.

The study sample comprised 56 lecturers and 97 students from Faculty of Education, Souphanouvong University who were selected by simple random sampling. Survey and quantitative method were used as the research methodology. Research Instruments used to collect the data were a questionnaire. Statistics used included percentage, mean ($\bar{x}$), standard deviation (S.D.) and Priority Needs Index Modified ($PNI_{Modified}$). Dependent sample T-test was applied.

The research results were as follows: 1) The state of the problems of teaching and learning for lecturers at Souphanouvong University, including the overall average, was medium; meanwhile the needs assessment for applying E-Learning in teaching and learning statistics for research was highest levels. The needs assessment to application of e-learning in teaching and learning statistics for Research by all groups of the sample was an essential requirement for all items, with the overall average of 0.45 ($PNI_{Modified} = 0.45$). The results of using E-Learning were impact to student as the first priority of the $PNI_{Modified}$; secondly were E-Learning system management; third were environment of E-Learning and finally were E-Learning activities management, respectively, and 2) E-Learning had been a good quality on the suitable and consistency with reliability of Cronbach's Alpha Coeffiecient equal 0.85. The results of this study will be used to application of e-learning in teaching and learning statistics for research.

**Keyword:** *E-Learning, Statistics for research, Needs Assessment*

## 1. ພາກສະເໜີ

ໃນສະພາບປັດຈຸບັນການຮຽນຮູ້ ແລະ ເທັກໂນໂລຍີຂໍ້ມູນຂ່າວສານ ແລະ ການສື່ສານ (Information Communication Technology: ICT) ມີຄວາມຈໍາເປັນໃນການພັດທະນາໄປຄວບຄູ່ກັນ ໂດຍສະເພາະໃນການພັດທະນາວຽກງານການສຶກສາ ເພາະວ່າການສຶກສາເປັນພື້ນຖານຂອງການພັດທະນາເສດຖະກິດ - ສັງຄົມ ເວົ້າລວມ, ເວົ້າສະເພາະການພັດທະນາຂະບວນການຈັດການຮຽນການສອນໃຫ້ກ້າວໜ້າເທົ່າທັນກັບການປ່ຽນແປງຂອງໂລກ. ກະຊວງສຶກສາທິການ ແລະ ກິລາ ຂອງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນຖານະທີ່ເປັນກະຊວງຫຼັກໃນການພັດທະນາການສຶກສາຂອງລາວເຮົາ ຈຶ່ງໄດ້ເອົາໃຈໃສ່ໃນການກໍານົດວິໄສທັດໃນການພັດທະນາວຽກງານ ICT ເຂົ້າໃນການພັດທະນາການຮຽນການສອນໃຫ້ມີຄຸນະພາບ ໂດຍກໍານົດວ່າ: “ຮອດປີ 2030 ເທັກໂນໂລຍີຂໍ້ມູນຂ່າວສານ ແລະ ການສື່ສານ ຫຼື ICT ຈະເປັນເຄື່ອງມືທີ່ມີຄວາມຍືນຍົງທີ່ຖືກນໍາມາໃຊ້ຢ່າງມີປະສິດທິຜົນ ແລະ ທົ່ວເຖິງເຂົ້າໃນການສຶກສາເພື່ອສົ່ງເສີມວຽກງານການສຶກສາໃຫ້ບັນລຸວິໄສທັດ ແລະ ເປົ້າໝາຍຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ” (ກະຊວງສຶກສາທິການ ແລະ ກິລາ, 2015) ໂດຍໄດ້ຊຸກຍູ້-ສົ່ງເສີມ ແລະ ພັດທະນາວຽກງານເທັກໂນໂລຍີຂໍ້ມູນຂ່າວສານ ແລະ ການສື່ສານ ຢ່າງຕໍ່ເນື່ອງໃຫ້ເປັນເຄື່ອງມືທີ່ໃຊ້ໄດ້ຈິງຢ່າງມີປະສິດທິພາບ ແລະ ມີຄວາມໝັ້ນຄົງ ສໍາລັບການປັບປຸງຄຸນນະພາບການຮຽນການສອນໃນຊັ້ນຕ່າງໆ ໃຫ້ທົ່ວເຖິງ ແລະ ທັນສະໄໝ, ໄດ້ຄຸນນພາບ ແລະ ມາດຕະຖານທຽບເທົ່າກັບພາກພື້ນ ແລະ ສາກົນເທື່ອລະກ້າວ. ດັ່ງນັ້ນ, ການຮຽນການສອນແບບອອນໄລ (E-learning) ເຊິ່ງແມ່ນສ່ວນໜຶ່ງຂອງເທັກໂນໂລຍີຂໍ້ມູນຂ່າວສານ ແລະ ການສື່ສານ ຈຶ່ງເປັນການຮຽນການສອນອີກຮູບແບບໜຶ່ງທີ່ມີປະສິດທິພາບໃນການພັດທະນາການຮຽນການສອນ, ເນື່ອງຈາກການຮຽນການສອນແບບນີ້ມີຄວາມຜ່ອນສັ້ນຜ່ອນຍາວໄດ້ (Sengsoulichanh, 2020). ໝາຍຄວາມວ່າຜູ້ຮຽນບໍ່ຈໍາເປັນຕ້ອງປັບຕົວໃຫ້ເຂົ້າກັບເງື່ອນໄຂທາງການສຶກສາພໍເທົ່າໃດ ແຕ່ສາມາດເຮັດໃຫ້ຮຽນໄດ້ທຸກເວລາ ເຊິ່ງເປັນໂອກາດທາງການສຶກສາໃຫ້ເຂົ້າເຖິງປວງຊົນໄດ້ຫຼາຍຂຶ້ນ.

ຄະນະສຶກສາສາດເປັນຄະນະໜຶ່ງທີ່ມີຄວາມສໍາຄັນຫຼາຍໃນ ມະຫາວິທະຍາໄລ ສຸພານຸວົງ ເຊິ່ງຄະນະສຶກສາສາດ (ຄສສ) ໄດ້ຮັບການສ້າງຕັ້ງຂຶ້ນພ້ອມກັບການສ້າງຕັ້ງ ມະຫາວິທະຍາໄລ ສຸພານຸວົງ ຕາມດໍາລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 099/ນຍ, ລົງວັນທີ 5 ພະຈິກ 2003 ແລະໄດ້ດໍາເນີນການຈັດການຮຽນ-ການສອນແຕ່ເລີ່ມກໍ່ຕັ້ງຈົນຮອດປະຈຸບັນໄດ້ມີການນໍາໃຊ້ຫຼັກສູດຢູ່ 4 ຫຼັກສູດ: ຫຼັກສູດ 2+3, ຫຼັກສູດ 1+4, ຫຼັກສູດ 0+4, ແລະ ປະຈຸບັນນໍາໃຊ້ຫຼັກສູດລະບົບ 12+4 ຂອງກົມສ້າງຄູທີ່ສອນໄດ້ແຕ່ ມ. 1 - ມ.7 ແລະ ຄະນະສຶກສາສາດ ໄດ້ມີວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ 10 ປີ (2016-2025) ແມ່ນໄດ້ເນັ້ນໜັກໃນການພັດທະນາລະບົບການສິດສອນ ແລະ ສະໜອງສື່ການຮຽນ-ການສອນ (ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ, 2015) ໂດຍສຸມໃສ່ກິດຈະກໍາຫຼັກຄື: ການປັບປຸງຫຼັກສູດທີ່ມີຢູ່ໃຫ້ສອດຄ້ອງ ເພີ່ມແນວຄິດຜູ້ປະກອບການເຂົ້າໃນການຮຽນ-ການສອນ, ການພັດທະນາປຶ້ມແບບຮຽນ ແລະ ຄູ່ມືການສິດສອນ, ການນໍາໃຊ້ ICT ເຂົ້າໃນການຮຽນ-ການສອນ ແລະ ເນັ້ນໃສ່ພາກປະຕິບັດຕົວຈິງຄຽງຄູ່ກັບການສິດສອນທິດສະດີ.

ແນວໃດກໍ່ຕາມສະພາບການຈັດການຮຽນການສອນຢູ່ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສ່ວນໃຫຍ່ແມ່ນຍັງດໍາເນີນການຮຽນ-ການສອນໃນຮູບແບບເດີມ ເຊັ່ນ: ນັກສຶກສາ ແລະ ຜູ້ສອນໃຊ້ເນື້ອໃນບົດຮຽນເປັນຫຼັກຈາກປຶ້ມຕໍາລາຮຽນ ແລະ ການບັນລະຍາຍຂອງຜູ້ສອນ ໂດຍສະເພາະໃນໝວດວິຊາພື້ນຖານວິຊາສະເພາະ ເຊິ່ງໃນນີ້ເຫັນວ່າວິຊາສະຖິຕິສໍາລັບການຄົ້ນຄວ້າ ກໍແມ່ນວິຊາໜຶ່ງທີ່ເປັນພື້ນຖານວິຊາສະເພາະໃຫ້ແກ່ວິຊາອື່ນ ໂດຍສະເພາະວິທີຄົ້ນຄວ້າທາງການສຶກສາ ແລະ ການຂຽນບົດໂຄງການຈົບຊັ້ນເຊິ່ງເປັນເງື່ອນໄຂຂອງການຈົບຫຼັກສູດລະດັບປະລິນຍາຕີ ແຕ່ການຈັດການຮຽນການສອນໃນລາຍວິຊາດັ່ງກ່າວໃນໄລຍະຜ່ານມາຖືວ່າຍັງບໍ່ປະສົບຜົນສໍາເລັດອັນເນື່ອງມາຈາກຜູ້ສອນຍັງບໍ່ໄດ້ມີການນໍາເອົາເທັກໂນໂລຍີ, ສື່ການຮຽນໃນຮູບແບບທີ່ທັນສະໄໝມາຊ່ວຍໃນການຈັດການເນື້ອໃນລາຍວິຊາ ແລະ ຍັງຂາດການນໍາໃຊ້ໂປຣແກຣມຊ່ວຍໃນການວິເຄາະຂໍ້ມູນການຄົ້ນຄວ້າທາງການສຶກສາ ເຊິ່ງອາດຈະເປັນສ່ວນໜຶ່ງເຮັດໃຫ້ຜົນການຮຽນຂອງນັກສຶກສາຜ່ານເກນໃນລາຍວິຊາດັ່ງກ່າວພຽງ 55%; 62.5% ແລະ 45.8 % ໃນສົກສຶກສາ 2016-2017, 2017-2018 ແລະ 2018 -2019 ເຊິ່ນັກສຶກສາຈໍາເປັນຕ້ອງລົງທະບຽນຮຽນຄືນໃນພາກຮຽນທີ 3 (ພະແນກວິຊາການ ຄະນະສຶກສາສາດ, 2020) ເຊິ່ງເປັນຕົ້ນເຫດທີ່ເຮັດໃຫ້ນັກສຶກສາບໍ່ສາມາດນໍາໃຊ້ສະຖິຕິ ແລະ ໂປຼແກຼມທີ່ຖືກຕ້ອງເຂົ້າໃນການຄົ້ນຄວ້າຄົ້ນຄວ້າບົດໂຄງການຈົບຊັ້ນຂອງຂອງຕົນ. ສະນັ້ນ, ຄະນະສຶກສາສາດ ຈຶ່ງໄດ້ມີນະໂຍບາຍຊຸກຍູ້ໃຫ້ອາຈານສອນພັດທະນາສື່ການຮຽນການສອນໃນຮູບແບບຕ່າງໆໃຫ້ມີ

ປະສິດທິພາບ ແລະ ມີຄວາມໝ້າສົນໃຈຫຼາຍຍິ່ງຂຶ້ນ ສ້າງໂອກາດໃນການເຂົ້າເຖິງສື່ການຮຽນເຫຼົ່ານັ້ນດ້ວຍວິທີການທີ່ຫຼາກຫຼາຍ ໂດຍການນຳເທັກໂນໂລຢີເຂົ້າມາຊ່ວຍໃນການບໍລິຫາຈັດການ ຊ່ວຍໃຫ້ນັກສຶກສາເຂົ້າເຖິງເນື້ອໃນລາຍວິຊາໄດ້ທຸກທີ່ທຸກເວລາ ໂດຍສະເພາະແມ່ນນັກສຶກສາປີສຸດທ້າຍຂອງ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ຕ້ອງຮູ້ຈັກນຳໃຊ້ສະຖິຕິໄດ້ຢ່າງຖືກຕ້ອງເຂົ້າໃນການຂຽນການຄົ້ນຄວ້າຂອງຕົນເອງ ແລະ ໃຫ້ກ້າວໄປສູ່ແຜນພັດທະນາຂອງກະຊວງສຶກສາທິການ ແລະ ກິລາ ໃນໄລຍະ 5 ປີ (2016-2020) ສຳລັບຂະແໜງການຍ່ອຍ ແລະ ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ 10 ປີ (2016-2025) ທີ່ໄດ້ກ່າວມາຂ້າງເທິງ.

ແນວໃດກໍ່ຕາມສະພາບການຈັດການຮຽນການສອນຢູ່ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ສ່ວນໃຫຍ່ແມ່ນຍັງດຳເນີນການຮຽນ-ການສອນໃນຮູບແບບເດີມ ເຊັ່ນ: ນັກສຶກສາ ແລະ ຜູ້ສອນໃຊ້ເນື້ອໃນບົດຮຽນເປັນຫຼັກຈາກປຶ້ມຕຳລາຮຽນ ແລະ ການບັນລະຍາຍຂອງຜູ້ສອນ ໂດຍສະເພາະໃນໝວດວິຊາພື້ນຖານວິຊາສະເພາະ ເຊິ່ງໃນນີ້ເຫັນວ່າວິຊາສະຖິຕິສຳລັບການວິໄຈ ກໍແມ່ນວິຊາໜຶ່ງທີ່ເປັນພື້ນຖານວິຊາສະເພາະໃຫ້ແກ່ວິຊາອື່ນ ໂດຍສະເພາະວິທີຄົ້ນຄວ້າທາງການສຶກສາ ແລະ ການຂຽນບົດໂຄງການຈົບຊັ້ນເຊິ່ງເປັນເງື່ອນໄຂຂອງການຈົບຫຼັກສູດລະດັບປະລິນຍາຕີ ແຕ່ການຈັດການຮຽນການສອນໃນລາຍວິຊາດັ່ງກ່າວໃນໄລຍະຜ່ານມາຖືວ່າຍັງບໍ່ປະສົບຜົນສຳເລັດອັນເນື່ອງມາຈາກຜູ້ສອນຍັງບໍ່ໄດ້ມີການນຳເອົາເທັກໂນໂລຢີ, ສື່ການຮຽນໃນຮູບແບບທີ່ທັນສະໄໝມາຊ່ວຍໃນການຈັດການເນື້ອໃນລາຍວິຊາ ແລະ ຍັງຂາດການນຳໃຊ້ໂປຼແກຼມຊ່ວຍໃນການວິເຄາະຂໍ້ມູນການຄົ້ນຄວ້າທາງການສຶກສາ ເຊິ່ງອາດຈະເປັນສ່ວນໜຶ່ງເຮັດໃຫ້ຜົນການຮຽນຂອງນັກສຶກສາຜ່ານເກນໃນລາຍວິຊາດັ່ງກ່າວພຽງ 55%; 62.5% ແລະ 45.8% ໃນສົກສຶກສາ 2016-2017, 2017-2018 ແລະ 2018-2019 ເຊິ່ນັກສຶກສາຈຳເປັນຕ້ອງລົງທະບຽນຮຽນຄືນໃນພາກຮຽນທີ 3 (ພະແນກວິຊາການ ຄະນະສຶກສາສາດ, 2020) ເຊິ່ງເປັນຕົ້ນເຫດທີ່ເຮັດໃຫ້ນັກສຶກສາບໍ່ສາມາດນຳໃຊ້ສະຖິຕິ ແລະ ໂປຼແກຼມທີ່ຖືກຕ້ອງເຂົ້າໃນການຄົ້ນຄວ້າຄົ້ນຄວ້າບົດໂຄງການຈົບຊັ້ນຂອງຂອງຕົນ. ສະນັ້ນ, ຄະນະສຶກສາສາດຈຶ່ງໄດ້ມີນະໂຍບາຍຊຸກຍູ້ໃຫ້ອາຈານສອນພັດທະ ນາສື່ການຮຽນການສອນໃນຮູບແບບຕ່າງໆໃຫ້ມີປະສິດ ທິພາບ ແລະ ມີຄວາມໜ້າສົນໃຈຫຼາຍຍິ່ງຂຶ້ນ ສ້າງໂອກາດໃນການເຂົ້າເຖິງສື່ການຮຽນເຫຼົ່ານັ້ນດ້ວຍວິທີການທີ່ຫຼາກຫຼາຍ ໂດຍການນຳເທັກໂນໂລຢີເຂົ້າມາຊ່ວຍໃນການບໍລິຫາຈັດການ ຊ່ວຍໃຫ້ນັກສຶກສາເຂົ້າເຖິງເນື້ອໃນລາຍວິຊາໄດ້ທຸກທີ່ທຸກເວລາ ໂດຍສະເພາະແມ່ນນັກສຶກສາປີສຸດທ້າຍຂອງ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ຕ້ອງຮູ້ຈັກນຳໃຊ້ສະຖິຕິໄດ້ຢ່າງຖືກຕ້ອງເຂົ້າໃນການຂຽນການຄົ້ນຄວ້າຂອງຕົນເອງ ແລະ ໃຫ້ກ້າວໄປສູ່ແຜນພັດທະນາຂອງກະຊວງສຶກສາທິການ ແລະ ກິລາ ໃນໄລຍະ 5 ປີ (2016-2020) ສຳລັບຂະແໜງການຍ່ອຍ ແລະ ວິໄສທັດຮອດປີ 2030 ແລະ ຍຸດທະສາດການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ 10 ປີ (2016-2025) ທີ່ໄດ້ກ່າວມາຂ້າງເທິງ.

ຈາກການສຶກສາທາງດ້ານທິດສະດີ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງ ພົບວ່າ ແນວທາງໃນການພັດທະນາການສຶກສາໂດຍສະເພາະການໃຊ້ເທັກໂນໂລຢີຂໍ້ມູນຂ່າວສານ ແລະ ການສື່ສານເຂົ້າມາມີບົດບາດໃນຂະບວນການຈັດການຮຽນການສອນ ເຊິ່ງນິຍົມໃຊ້ກັນຢ່າງແຜ່ຫຼາຍ ຄືການຈັດການຮຽນການສອນຜ່ານເຄືອຂ່າຍອິນເຕີເນັດ ໂດຍໃຊ້ E-Learning ເຊິ່ງເປັນເຄື່ອງມືທີ່ຊ່ວຍໃນການຮຽນການສອນໄດ້ດີ ເນື່ອງຈາກຜູ້ສອນນຳເນື້ອໃນການສອນ ແລະ ສື່ການສອນເຂົ້າໄວ້ໃນລະບົບຕາມລາຍວິຊາ, ຜູ້ຮຽນເຂົ້າເຖິງເນື້ອໃນບົດຮຽນ ແລະ ກິດຈະກຳຕ່າງໆ ຜ່ານເວບໄຊທ໌. ຜູ້ສອນ ແລະ ຜູ້ຮຽນຕິດຕໍ່ສື່ສານຜ່ານເຄື່ອງມືສື່ສານທີ່ລະບົບຈັດໄວ້ໃຫ້ ເຊັ່ນ: ຫ້ອງສົນທະນາ, ກະດານສົນທະນາ ແລະ ອື່ນໆ ທີ່ສາມາດບັນທຶກຂໍ້ມູນ ແລະ ກິດຈະກຳການຮຽນຂອງຜູ້ຮຽນໄວ້ໃນລະບົບເພື່ອຜູ້ສອນສາມາດນຳໄປວິເຄາະ, ຕິດຕາມ ແລະ ປະເມີນຜົນການຮຽນການສອນໃນລາຍວິຊານັ້ນໆ ໄດ້ດີຢ່າງມີປະສິດທິພາບ (SEAMEO, 2010 & Lapcharoen, 2020).

ຈາກເຫດຜົນທີ່ກ່າວມາໃນເບື້ອງຕົ້ນ, ທີມງານນັກຄົ້ນຄວ້າຈຶ່ງສົນໃຈສຶກສາຄວາມຕ້ອງການຈຳເປັນໃນການນຳໃຊ້ບົດຮຽນ E- Learning ເຂົ້າໃນໃນຂະບວນການຮຽນ-ການສອນ ວິຊາສະຖິຕິສຳລັບການວິໄຈ. ໂດຍມີຈຸດປະສົງຄື 1) ເພື່ອສຳຫຼວດຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ, 2) ເພື່ອປຽບທຽບຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ ໂດຍຈຳແນກຕາມກຸ່ມຕົວຢ່າງ ແລະ 3) ເພື່ອປະເມີນຄຸນນະພາບຂອງບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບ

ການວິໄຈ.

## 2. ອຸປະກອນ ແລະ ວິທີການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ ແມ່ນສ່ວນໜຶ່ງຂອງງານຄົ້ນຄວ້າ ເລື່ອງ ການປະຍຸກໃຊ້ບົດຮຽນ E- Learning ໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ ໂດຍຜູ້ຄົ້ນຄວ້າໄດ້ນຳໃຊ້ລະບຽບວິທີວິໄຈແບບສຳຫຼວດ (Survey Research) (Creswell, 2011) ເຊິ່ງໄດ້ດຳເນີນການ ດັ່ງນີ້:

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາຄັ້ງນີ້ ແມ່ນອາຈານ ແລະ ນັກສຶກສາ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2019-2020 ໂດຍຈຳແນກເປັນອາຈານ 65 ຄົນ ແລະ ນັກສຶກສາ ຈຳນວນ 126 ຄົນ ແລະ ກຸ່ມຕົວຢ່າງແມ່ນໄດ້ກຳນົດຂະໜາດຕົວຢ່າງຕາມສູດຂອງ ເຄຣຊີ ແລະ ມໍແກ່ນ (Srisaard, 2010) ເຊິ່ງໃຊ້ວິທີການສຸ່ມແບບງ່າຍດາຍ ໄດ້ກຸ່ມຕົວຢ່າງປະກອບດ້ວຍອາຈານ ຈຳນວນ 56 ຄົນ ແລະ ນັກສຶກສາຈຳນວນ 97 ຄົນ ທີ່ເປັນອາຈານ ແລະ ນັກສຶກສາຂອງ ມະຫາວິທະຍາໄລ ສຸພານຸວົງ.

### 2.2 ແບບແຜນການຄົ້ນຄວ້າ

ການຄົ້ນຄວ້າໃນຄັ້ງນີ້ ເປັນການຄົ້ນຄວ້າແບບສຳຫຼວດ (Survey Research) ໂດຍໃຊ້ລະບຽບວິທະຍາການຄົ້ນຄວ້າແບບປະສົມປະສານ (Mixed Methods Research) ດ້ວຍການອອກແບບການຄົ້ນຄວ້າແບບຮອງຮັບພາຍໃນ (The Embedded Design) ດ້ວຍການສຶກສາທາງດ້ານປະລິມານ ແລະ ເສີມດ້ວຍດ້ານຄຸນນະພາບ (ດັ່ງຮູບພາບທີ 1) (Creswell & Clark, 2011).

### 2.3 ຂັ້ນຕອນການດຳເນີນການຄົ້ນຄວ້າ

ຂັ້ນຕອນໃນການຄົ້ນຄວ້າຄັ້ງນີ້ປະກອບດ້ວຍ 1) ການວິເຄາະຂໍ້ມູນ (Analysis) ເປັນການວິເຄາະສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນສຳລັບການນຳໃຊ້ບົດຮຽນ E-Learning ໃນການຈັດການຮຽນການສອນ 2) ການອອກແບບ (Design) ແລະ ພັດທະນາບົດຮຽນ E-Learning ປະກອບດ້ວຍ 5 ດ້ານ: ດ້ານການອອກແບບເປົ້າໝາຍ/ຈຸດປະສົງການຮຽນຮູ້, ດ້ານການອອກແບບວິທີການຮຽນຮູ້ ແລະ ວິທີການເລືອກສື່ຕ່າງໆ, ດ້ານການອອກແບບຮູບແບບການປະເມີນຜົນ, ດ້ານການກຳນົດລາຍການພຶດຕິກຳກ່ອນຮຽນ, ດ້ານການອອກແບບການໃຊ້ສື່/ເທັກໂນໂລຢີ/ຊັບພະຍາກອນການຮຽນຮູ້ ແລະ ວິທີການສົ່ງຜ່ານເນື້ອໃນບົດຮຽນ.

### 2.4 ເຄື່ອງມື ແລະ ການຫາຄຸນນະພາບເຄື່ອງມື

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ປະກອບດ້ວຍແບບສອບຖາມຊະນິດປະເມີນຄ່າ 5 ລະດັບ (Rating Scale) ທີ່ເປັນຮູບແບບຕອບສະໜອງຄູ່ (Dual-Response Format) ທີ່ລະບຸສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ ໂດຍແບ່ງເປັນ 3 ຕອນຄື: ຕອນທີ 1 ຂໍ້ມູນກ່ຽວກັບສະຖານະພາບທົ່ວໄປ, ຕອນທີ 2 ຂໍ້ມູນສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ ປະກອບດ້ວຍ 4 ດ້ານ ໄດ້ແກ່ ການຈັດລະບົບການຮຽນການສອນ E-Learning, ການຈັດກິດຈະກຳການຮຽນການສອນ E-Learning, ຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ ແລະ ດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning ແລະ ຕອນທີ່ 3 ຄວາມຄິດເຫັນເພີ່ມເຕີມ

### 2.5 ການວິເຄາະຂໍ້ມູນ ແລະ ເກນທີ່ໃຊ້ໃນການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນດ້ວຍຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ ແລະ ທົດສອບຜົນການຮຽນດ້ວຍການທົດສອບຄ່າ ທີ (t-test) ແບບ dependent sample t-test.

ຜູ້ຄົ້ນຄວ້າກຳນົດເກນໃນການສຶກສາສະພາບປັດຈຸບັນ ແລະ ປະເມີນຄວາມຕ້ອງການຈຳເປັນດັ່ງນີ້:

| ຄ່າສະເລ່ຍ | ລະດັບສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ |
|---|---|
| 4.50 – 5.00 | ລະດັບການປະຕິບັດ/ຄວາມຕ້ອງການຫຼາຍທີ່ສຸດ |
| 3.50 – 4.49 | ລະດັບການປະຕິບັດ/ຄວາມຕ້ອງການຫຼາຍ |
| 2.50 – 3.49 | ລະດັບການປະຕິບັດບາງຄັ້ງຄາວ/ຄວາມຕ້ອງການປານກາງ |
| 1.50 – 2.49 | ລະດັບການປະຕິບັດ/ຄວາມຕ້ອງການໜ້ອຍ. |
| ນ້ອຍກວ່າ 1.50 | ລະດັບການປະຕິບັດ/ຄວາມຕ້ອງການໜ້ອຍທີ່ສຸດ |

ວິເຄາະຄວາມຕ້ອງການຈຳເປັນດ້ວຍຄ່າດັດສະນີຄວາມຕ້ອງການຈຳເປັນ ດັ່ງນີ້

$$PNI_{\text{modifies}} = \frac{I - D}{D}$$

ເຊິ່ງວ່າ: $PNI_{modified}$ ແມ່ນດັດສະນີຄວາມຕ້ອງການຈຳເປັນ, $I$ ແມ່ນຄວາມຕ້ອງການຈຳເປັນ ແລະ D ແມ່ນສະ ພາບປັດຈຸບັນ ໂດຍຄ່າດັດສະນີ $PNI_{Modified} >= 0.02$.

## 3. ຜົນໄດ້ຮັບ

1) ຜົນການວິເຄາະສະພາບປັດຈຸບັນ ແລະ ຄວາມຕ້ອງການຈໍາເປັນໃນການປະຍຸກໃຊ້ບົດຮຽນ E-Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສໍາລັບການວິໄຈ ພົບວ່າ:

ສະພາບປັດຈຸບັນໃນການດໍາເນີນການຈັດການຮຽນການສອນຂອງອາຈານທັງຂໍ້ມູນຈາກກຸ່ມຕົວຢ່າງທີ່ເປັນອາຈານ ແລະ ນັກສຶກສາໂດຍພາບລວມຢູ່ໃນລະດັບປານກາງ ມີຄ່າສະເລ່ຍລວມ ເທົ່າກັບ 3.19 ຄ່າຜັນປ່ຽນມາດ ຖານ ເທົ່າກັບ 0.07 ແລະ ເມື່ອພິຈາລະນາເປັນລາຍດ້ານພົບວ່າທຸກດ້ານຢູ່ໃນລະດັບປານກາງທັງໝົດ ເຊິ່ງມີຄະສະເລ່ຍລະຫວ່າງ 3.17-3.38 (ສະແດງໄວ້ໃນຕາຕະລາງທີ 1).

ຄວາມຕ້ອງການຈໍາເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສໍາລັບການວິໄຈ ພົບວ່າ ຄວາມຕ້ອງການຈໍາເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສໍາລັບການວິໄຈໂດຍພາບລວມຢູ່ໃນລະດັບຫຼາຍທີ່ສຸດ ມີຄ່າສະເລ່ຍ 4.63 ຄ່າຜັນປ່ຽນມາດຕະຖານ 1.52 ເມື່ອພິຈາລະນາເປັນລາຍດ້ານເຫັນວ່າທຸກດ້ານລ້ວນແຕ່ຢູ່ໃນລະດັບຫຼາຍທີ່ສຸດທັງໝົດ ເຊິ່ງມີຄ່າສະເລ່ຍລະຫວ່າງ 4.53-4.79 (ດັ່ງທີ່ສະແດງໄວ້ໃນຕາຕະລາງທີ 2).

ເມື່ອປຽບທຽບສະພາບປັດຈຸບັນ, ຄວາມຕ້ອງການຈໍາເປັນ ແລະ ລໍາດັບຄວາມສໍາຄັນດັດສະນີຄວາມຕ້ອງການຈໍາເປັນໂດຍກຸ່ມຕົວຢ່າງມີຄວາມຕ້ອງການຈໍາເປັນບໍ່ແຕກຕ່າງກັນໃນທຸກດ້ານ ແລະ ລໍາດັບຄວາມສໍາຄັນຂອງຄວາມຕ້ອງການຈໍາເປັນໂດຍພາບລວມເທົ່າກັບ 0.45 ($PNI_{Modifies}$ = 0.45). ລາຍການທີ່ມີຄວາມຕ້ອງການຈໍາເປັນສູງສຸດ ຄື ດ້ານທີ 3. ຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ ($PNI_{Modifies}$ = 0.49). ລໍາດັບທີ 2 ແມ່ນດ້ານທີ 1 ການຈັດລະບົບການຮຽນການສອນ E-Learning ($PNI_{Modifies}$ = 0.46). ລໍາດັບທີ 3 ແມ່ນດ້ານທີ 4 ດ້ານສິ່ງອໍານວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning ($PNI_{Modifies}$ = 0.43) ແລະ ລໍາດັບທີ 4 ແມ່ນດ້ານທີ 2 ການຈັດກິດຈະກໍາການຮຽນການສອນ E-Learning ($PNI_{Modifies}$ = 0.41) (ດັ່ງທີ່ສະແດງໄວ້ໃນຕາຕະລາງທີ 3).

2) ບົດຮຽນ E- Learning ທີ່ໝູນໃຊ້ເຂົ້າໃນການຮຽນການສອນວິຊາສະຖິຕິສໍາລັບການວິໄຈ ປະກອບດ້ວຍ 5 ດ້ານ, ໄດ້ແກ່ ດ້ານການອອກແບບເປົ້າໝາຍ/ຈຸດປະສົງການຮຽນຮູ້, ດ້ານການອອກແບບວິທີການຮຽນຮູ້ ແລະ ວິທີການເລືອກສື່ຕ່າງໆ, ດ້ານການອອກແບບຮູບແບບການປະເມີນຜົນ, ດ້ານການກໍານົດລາຍການພຶດຕິກໍາກ່ອນຮຽນ, ດ້ານການອອກແບບການໃຊ້ສື່/ເທັກໂນໂລຢີ/ຊັບພະຍາກອນການຮຽນຮູ້ ແລະ ວິທີການສົ່ງຜ່ານເນື້ອໃນບົດຮຽນ. ໂດຍແບ່ງເນື້ອໃນບົດຮຽນທີ່ຈະສອນອອກເປັນ 5 ບົດ ທີ່ປະກອບດ້ວຍບົດເຝິກປະຕິບັດເອງໃນແຕ່ລະບົດຮຽນ ໂດຍໃຊ້ເວລາໃນການຮຽນຂອງນັກສຶກສາແມ່ນ ບົດລະ 8 ຊົ່ວໂມງ (ຮຽນດ້ວຍຕົນເອງ ແລະ ເຮັດກິດຈະກໍາໃນຫ້ອງຮຽນພ້ອມທັງປຶກສາຫາລືລະຫວ່າງອາຈານ-ນັກສຶກສາ ແລະ ນັກສຶກສາ-ນັກສຶກສາດ້ວຍກັນເອງ) ທັງໝົດແມ່ນ ຈໍານວນ 40 ຊົ່ວໂມງ ລາຍລະອຽດດັ່ງນີ້:

1. ຄວາມເຂົ້າໃຈເບື້ອງຕົ້ນກ່ຽວກັບສະຖິຕິ ແລະ ການນໍາໃຊ້ໂປຣແກຣມ SPSS
2. ປະຊາກອນ ແລະ ກຸ່ມຕົວຢ່າງ
3. ການສ້າງ ແລະ ຫາຄຸນນະພາບຂອງເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ
4. ການທົດສອບສົມມຸດຖານ 1 ແລະ 2 ກຸ່ມປະຊາກອນ ຂອງແບບທົດສອບ
5. ການວິເຄາະສົມຜົນທົດຖອຍ (Regression Analysis)

ຫຼັງຈາກນັ້ນດໍາເນີນການພັດທະນາຄຸນນະພາບຂອງບົດຮຽນ E- Learning ດ້ວຍການການກວດສອບຄວາມສອດຄ່ອງ ແລະ ຄວາມເໝາະສົມຈາກຜູ້ຊ່ຽວຊານ 3 ທ່ານ ພົບວ່າ ບົດຮຽນ E- Learning ມີຄວາມສອດຄ່ອງ ເຊິ່ງມີດັດສະນີຄວາມສອດຄ່ອງ 1.00 (IOC = 1.00) ແລະ ມີຄວາມເໝາະສົມຫຼາຍທີ່ສຸດ ($\bar{x}=4.91, S.D=0.33$) ແລະ ເມື່ອນໍາຫຼັກສູດດັ່ງກ່າວໄປທົດລອງກັບກຸ່ມຕົວຢ່າງທົດລອງຈໍານວນ 18 ຄົນ ພົບວ່າ ບົດຮຽນ E-Learning ມີລະດັບຄວາມເຊື່ອໝັ້ນ (Cronbach's Alpha Coeffiecient) ເທົ່າກັບ 0.85.

## 4. ວິພາກຜົນຮັບ

ຈາກຜົນໄດ້ຮັບຈາກການຄົ້ນຄວ້າການປະເມີນຄວາມຕ້ອງການຈໍາເປັນໃນຄັ້ງນີ້ພົບວ່າ ສະພາບປັດຈຸບັນຢູ່ໃນລະດັບປານກາງ ເຊິ່ງສອດຄ່ອງກັບງານຄົ້ນຄວ້າຂອງ Phansaita & Kasai (2019) ໄດ້ສຶກສາຄວາມຕ້ອງການຈໍາເປັນໃນການຝຶກອົບຮົມ ແລະ ຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນສາຍອາຊີບຂອງບຸກຄະລາກອນສາຍສະໜັບສະໜູນຂອງວິທະຍາໄລດຸສິດທານີ ພົບວ່າ ດ້ານການສຶກສາມີສະພາບປັດຈຸບັນຢູ່ໃນລະດັບປານກາງ ໃນນີ້ມີຄວາມຄາດຫວັງຕໍ່ຄວາມກ້າວໜ້າໃນອາຊີບດ້ານຕໍາແໜ່ງ/ໜ້າທີ່/

ຄວາມຮັບຜິດຊອບໃນລະດັບປານກາງເຊັ່ນດຽວກັນ ເຊິ່ງເປັນການສຶກສາສະພາບທີ່ເປັນປັດຈຸບັນເພື່ອເປັນພື້ນຖານໃນການສຶກສາຫາຄວາມຕ້ອງການຈຳເປັນຕໍ່ໄປ ໂດຍມີຜົນການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມຈາກການພິຈາລະນາຄາດັດສະນີຄວາມສຳຄັນມີຄວາມຕ້ອງການຈຳເປັນໃນລະດັບຫຼາຍທີ່ສຸດທຸກດ້ານ. ນອກຈາກນີ້, ຜົນການຄົ້ນຄວ້າຄັ້ງນີ້ຍັງມີທັງສ່ວນທີ່ສອດຄ່ອງ ແລະ ບໍ່ສອດຄ່ອງກັບງານຄົ້ນຄວ້າຂອງ Patisonthicharoen (2012) ກ່ຽວກັບຄວາມຕ້ອງການຈຳເປັນເພື່ອພັດທະນາສັກກາຍະພາບຂອງບຸກຄະລາກອນໃນສັງກັດ ມະຫາວິທະຍາໄລ ສີນະຄະຣິນວິໂຫຼດ, ໂດຍສ່ວນຜົນທີ່ສອດຄ່ອງກັນຄືບຸກຄະລາກອນໃນສັງກັດ ມະຫາວິທະຍາໄລສີນະຄະຣິນວິໂຫຼດ ມີຄວາມຕ້ອງການຝຶກອົບຮົມເພື່ອພັດທະນາສັກກະຍະພາບ ໂດຍພາບລວມ ແລະ ລາຍດ້ານຢູ່ໃນລະດັບຫຼາຍທີ່ສຸດ ແລະ ໃນສ່ວນທີ່ບໍ່ສອດຄ່ອງ ຄື: ບຸກຄະລາກອນໃນສັງກັດມະຫາວິທະຍາໄລສີນະຄະຣິນວິໂຫຼດທີ່ມີເພດຕ່າງກັນ , ມີອາຍຸຕ່າງກັນ, ມີລະດັບການສຶກສາທີ່ແຕກຕ່າງກັນມີຄວາມຕ້ອງການໃນການຝຶກອົບຮົມທີ່ແຕກຕ່າງກັນຢ່າງບໍ່ມີລະດັບຄວາມສຳຄັນທາງສະຖິຕິ. ໃນນີ້ຜົນການຄົ້ນຄວ້າແຕກຕ່າງກັນອາດຈະເປັນຍ້ອນວ່າ ທັງສອງມະຫາວິທະຍາໄລ ພວກເຮົາ ມີຄວາມແຕກຕ່າງທາງດ້ານນະໂຍບາຍການສຶກສາ, ແຕກຕ່າງທາງດ້ານບໍລິບົດ, ແຕ່ຕ່າງທາງດ້ານສະພາບແວດລ້ອມ ແລະ ວິທີການສອນ ຈຶ່ງເຮັດໃຫ້ຜົນຄົ້ນຄ້ານີ້ແຕກຕ່າງກັນ. ນອກຈາກນີ້ແລ້ວ ຜົນການຄົ້ນຄວ້ານີ້ຍັງສອດຄ່ອງກັບງານຄົ້ນຄວ້າຂອງ Louangphone et al. (2019) ການປະເມີນຄວາມຕ້ອງການຈຳເປັນໃນການຝຶກອົບຮົມກ່ຽວກັບກ່ຽວກັບການອອກແບບການຈັດການຮຽນການສອນສຳລັບຄູອະຊີວະສຶກສາ, ສາຂາຊ່າງອຸດສະຫະກຳໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ຜົນການຄົ້ນຄວ້າພົບວ່າ ດັດສະນີຄວາມສຳຄັນຂອງຄວາມຕ້ອງການຈຳເປັນຢູ່ໃນລະດັບຫຼາຍທີ່ສຸດ ເມື່ອລຽງລຳດັບຄວາມສຳຄັນແຕ່ຫຼາຍໄປຫາໜ້ອຍໄດ້ແກ່ ການອອກແບບສື່ການສອນ, ການວິເຄາະຫຼັກສູດ, ວິທີການສອນແບບໃໝ່ ຕາມລຳດັບ ໂດຍມີຄ່າດັດສະນີຄວາມສຳຄັນຂອງລະດັບຄວາມຕ້ອງການຈຳເປັນຢູ່ລະຫວ່າງ 0.44-0.57.

ສ່ວນຄຸນນະພາບຂອງບົດຮຽນ E-Learning ເຫັນວ່າ ມີຄວາມສອດຄ່ອງ ແລະ ເໝາະສົມ ເຊິ່ງມີລະດັບຄວາມເຊື່ອໝັ້ນ (Cronbach’s Alpha Coefficient) ຢູ່ໃນລະດັບສູງ ໂດຍສອດຄ່ອງກັບງານຄົ້ນຄວ້າຂອງ Vathanavong et al. (2021) ທີ່ສຶກສາກ່ຽວກັບຄວາມທ້າທາຍໃນການພັດທະນາຫຼັກສູດຝຶກອົບຮົມເພື່ອສົ່ງເສີມຄວາມສາມາດໃນການຈັດການຮຽນການສອນທັກສະແຫ່ງສະຕະວັດທີ 21 ໃນສະຖານະການວິຖີຊີວິດແບບໃໝ່ (New Normal) ແລະ Vathanavong (2022) ທີ່ສຶກສາກ່ຽວກັບ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມເພື່ອສົ່ງເສີມຂະບວນການສຶກສາບົດຮຽນສຳລັບອາຈານ ມະຫາວິທະຍາໄລ ສຸພານຸວົງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຜົນການຄົ້ນຄວ້າທີ່ສອດຄ່ອງກັນວ່າສະພາບໃນການຈັດການຮຽນການສອນໃນປັດຈຸບັນຂອງອາຈານຢູ່ໃນລະດັບປານກາງ ແລະມີຄວາມຕ້ອງການຈຳເປັນໃນການຝຶກອົບຮົມຢູ່ໃນລະດັບຫຼາຍທີ່ສຸດ ຜົນການປຽບທຽບສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນໃນການຝຶກອົບຮົມເພື່ອສົ່ງເສີມຂະບວນການສຶກສາການສອນໂດຍຈຳແນກຕາມລະດັບການສຶກສາ, ຄະນະວິຊາ ແລະ ປະສົບການເຮັດວຽກບໍ່ແຕກຕ່າງກັນ ຍົກເວັ້ນລະດັບການສຶກສາທີ່ແຕກຕ່າງກັນມີສະພາບການປັດຈຸບັນໃນການຈັດການຮຽນການສອນທີ່ແຕກຕ່າງກັນ ດ້ວຍລະດັບຄວາມສຳຄັນ 0.05.

ການສຶກສາຄົ້ນຄວ້າຄັ້ງນີ້ບັນລຸຜົນດັ່ງທີ່ກ່າວມາຂ້າງເທິງນີ້ ຍ້ອນວ່າທີມງານຄົ້ນຄວ້າໄດ້ດຳເນີນການສຶກສາຢ່າງເປັນລະບົບເລີ່ມຕັ້ງແຕ່ການວິເຄາະຄວາມຈຳເປັນວ່ານັກສຶກສາ ແລະ ອາຈານ ມີຄວາມຈຳເປັນຕ້ອງໄດ້ມີຄວາມຮູ້ຄວາມເຂົ້າໃຈ ໃນດ້ານການວິເຄາະຂໍ້ມູນການວິໄຈທາງການສຶກສາ ແລະ ຮູ້ຈັກເລືອກໃຊ້ຕົວສະຖິຕິທີ່ຖືກຕ້ອງ ໃຫ້ຄຽງຄູ່ກັບການຂຽນການຄົ້ນຄວ້າຊັ້ນຮຽນຂອງຕົນເອງເພື່ອໃຫ້ມີປະສິດທິພາບເພີ່ມຂຶ້ນ ບໍ່ສະເພາະແຕ່ການຮຽນໃນຫ້ອງຮຽນເທົ່ານັ້ນ ຈຳເປັນຕ້ອງມີເທັກໂນໂລຍີເຂົ້າມາຊ່ວຍຈຶ່ງຈະເກີດການຮຽນຮູ້ໄດ້ດີຍິ່ງຂຶ້ນ ອີກທັງການນຳບົດຮຽນ E-Learning ເຂົ້າມາຊ່ວຍໃນການຈັດການຮຽນການສອນຍັງເປັນກະຕອບສະໜອງ ແລະ ສອດຄ່ອງກັບແນວທາງການພັດທະນາຄຸນນະພາບການສຶກສາໃນຍຸກໃໝ່ອີກດ້ວຍ.

## 5. ສະຫຼຸບຜົນ

ຈາກການຄົ້ນຄວ້າຄັ້ງນີ້ ສາມາດສະຫຼຸບຜົນໄດ້ດັ່ງນີ້:

1) ສະພາບປັດຈຸບັນໃນການນຳເອົາບົດຮຽນ E-Learning ເຂົ້າໃນຂະບວນການຮຽນການສອນ ຢູ່ໃນລະດັບປານກາງ ແລະ ຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E- Learning ເຂົ້າໃນຂະບວນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ ຢູ່ໃນລະດັບຫຼາຍ ເມື່ອລຽງລຳດັບຄວາມສຳຄັນຂອງຄວາມຕ້ອງການຈຳເປັນແລ້ວລຳດັບທີ 1 ແມ່ນຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ. ລຳດັບທີ 2 ແມ່ນດ້ານ

ການຈັດລະບົບການຮຽນການສອນ E-Learning. ລໍາດັບທີ 3 ແມ່ນດ້ານສິ່ງອໍານວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning ແລະ ລໍາດັບທີ 4 ແມ່ນດ້ານການຈັດກິດຈະກໍາການຮຽນການສອນ E-Learning.

2) ຄຸນນະພາບບົດຮຽນ E- Learning ທີ່ພັດທະນາຂຶ້ນມີຄວາມສອດຄ່ອງ ແລະ ມີຄວາມເໝາະສົມ ດ້ວຍລະດັບຄວາມເຊື່ອໝັ້ນທັງສະບັບ (Cronbach’s Alpha Coefficient) ເທົ່າກັບ 0.85.

ຈາກຜົນການສຶກສາຄົ້ນຄວ້າຄັ້ງນີ້ ສາມາດຢັ້ງຢືນວ່າບົດຮຽນ E- Learning ທີ່ພັດທະນາຂຶ້ນມີຄຸນນະພາບ ເຊິ່ງສາມາດນໍາໄປໃຊ້ໃນການສອນ ແລະ ປະເມີນຜົນໃນລາຍວິຊາສະຖິຕິສໍາລັບການວິໄຈໄດ້.

## 6. ຂໍ້ຂັດແຍ່ງ.

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າ ມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄໍາຂອບໃຈ

ໃນການຄົ້ນຄວ້າຄັ້ງນີ້ ລຸລ່ວງໄປດ້ວຍຜົນສໍາເລັດອັນປະເສີດນີ້ຂໍຂອບໃຈຢ່າງສູງມາຍັງ ກະຊວງສຶກສາທິການ ແລະ ກິລາ ໂດຍສະເພາະກົມການສຶກສາຊັ້ນສູງທີ່ໄດ້ໃຫ້ໂອກາດ ແລະ ສິ່ງເສີມທາງດ້ານງົບປະມານຮັບໃຊ້ໃຫ້ແກ່ງານຄົ້ນຄວ້າຄັ້ງນີ້ ພາຍໃຕ້ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ການສຶກສາຊັ້ນສູງ (CRF: Competitive Research Fund) ຈາກ ADB Grant No.0500 – Lao (SF): Second Strengthening Higher Education Project (SSHEP).

## 8. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2015). *ວິໄສທັດຮອດປີ 2030 ຍຸດທະສາດ ຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ 2016-2020*. ກະຊວງສຶກສາທິການ ແລະ ກິລາ.

ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ. (2015). *ຍຸດທະສາດການພັດທະນາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ 10 ປີ (2016-2025)*. ຫຼວງພະບາງ: ມະຫາວິທະຍາໄລ ສຸພານຸວົງ.

ພະແນກວິຊາການ ຄະນະສຶກສາສາດ. (2020). *ບົດສະຫຼຸບວຽກງານວິຊາການສຶກສຶກສາ 2016-2017, 2017-2018 ແລະ 2018-2019*. ຫຼວງພະບາງ: ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

Chaiwong, P. (2019). Development of e-learning Lessons, Information and Communication Technology Courses for Mattayomsuksa 3 Students Yang Talat Wittayakhan School. *Journal of Educational Technology and Communications Faculty of Education Mahasarakham University*, *2*(4), 120-131.

Creswell, J.W & Clark, P. (2011). *Mixed methods designs*. London: Sage publications Ltd. Harcourt, brace & world

Louangphone, S., Suksawat, B., & Stirayakorn, P. (2019). Training Need Assessment on Instructional Design for Industrial Track Vocational Teachers in Lao PDR. *The Journal of Faculty of Applied Art, 12*(2), 59-66.

Lapcharoen, S. (2020). Education E-Learning System to Develop the Potential of Learners in Bangkok to International Standards. *Journal of MCU Peace Study, 8(1)*, 295-307.
Retrieved from:https://so03.tci-thaijo.org/index.php/journal-peace/article/view/230437

Patisonthicharoen, R. (2012). *Staff Training Needs for Competency Development of Srinakharinwirot University*. Master of Education Degree in Business Education at Srinakharinwirot University. Retrieved from:
http://thesis.swu.ac.th/swuthesis/Bus_Ed/Ratana_Pa.pdf

Phansaita, N., & Kasai, P. (2019). The TrainingNeeds and the Expectation of Career Planning of Dusit Thani College’s Education Officer. *Dusit Thani College Journal, 11*(2), 202-2019. Retrieved from: https://so01.tci-thaijo.org/index.php/journaldtc/article/view/119995/91677

SEAMEO. (2015). *Report Status of ICT Intergration in Education in Southeast Asian Contries*. Bangkok: The Southeast

Asian Minister of Education Organization (SEAMEO) Secretariat.

Sengsoulichanh, T. (2020). *The Devdlopment Of Secondary School Mathematical Teachers in The Lao People's Democratic Republic Using the E-Traning System*. Thesis of Doctor of Philosophy in Curriculum and Instruction, Graduate School. Khon Kaen University.

Srisaard, B. (2010). *Introduction to Research Methodology (8th Edition) New-update.* Bangkok: Suwiriya Printing House.

Skager. (1978). *Lifelong Education and Evaluation Practice*. Oxford: unsci institute.

Vathanavong, V., Kuruda, A., Vathanavong, P., Semhirun, K., & Asai, K. (2021). Challenges in Developing Curriculum Training for Enhancing the Competencies in the 21st Century Skills-Based Learning in the New Normal Situations. *Souphanouvong Journal of Multidisciplinary Research and Development*, *7*(2), 29 - 42.

Vathanavong, T. (2022). Training Needs Assessment to Promote the Lesson Study Process for Lecturers of Souphanouvong University, Lao People's Democratic Republic. *National University of Laos 20*(2), 119 - 132.

ຕາຕະລາງທີ 1 ຄ່າສະເລ່ຍຂອງສະພາບປັດຈຸບັນໃນການດຳເນີນການຈັດການຮຽນການສອນ

| **ເນື້ອໃນລາຍການ** | **ຂໍ້ມູນຈາກອາຈານ (n = 56)** | | | **ຂໍ້ມູນຈາກນັກສຶກສາ (n = 97)** | | |
|---|---|---|---|---|---|---|
| | $\bar{x}$ | *S.D* | **ແປຜົນ** | $\bar{x}$ | *S.D* | **ແປຜົນ** |
| 1. ການຈັດລະບົບການຮຽນການສອນ E-Learning | 3.05 | 0.51 | ປານກາງ | 3.22 | 0.62 | ປານກາງ |
| 2. ການຈັດກິດຈະກຳການຮຽນການສອນ E-Learning | 3.38 | 0.62 | ປານກາງ | 3.17 | 0.73 | ປານກາງ |
| 3. ຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ | 3.17 | 0.57 | ປານກາງ | 3.14 | 0.71 | ປານກາງ |
| 4. ດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning | 3.18 | 0.75 | ປານກາງ | 3.30 | 0.72 | ປານກາງ |
| **ຄ່າສະເລ່ຍ** | **3.18** | **0.48** | **ປານກາງ** | **3.20** | **0.58** | **ປານກາງ** |
| **ຄ່າສະເລ່ຍລວມ** | **3.19** | **0.07** | | **ປານກາງ** | | |

ຕາຕະລາງທີ 2 ຄ່າສະເລ່ຍຂອງສະພາບຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ບົດຮຽນ E-Learning ເຂົ້າໃນການຮຽນການສອນ ວິຊາສະຖິຕິສຳລັບການວິໄຈ

| ເນື້ອໃນລາຍການ | ຂໍ້ມູນຈາກອາຈານ **(n = 56)** | | | ຂໍ້ມູນຈາກນັກສຶກສາ **(n = 97)** | | |
|---|---|---|---|---|---|---|
| | $\bar{x}$ | *S.D* | ແປຜົນ | $\bar{x}$ | *S.D* | ແປຜົນ |
| 1. ການຈັດລະບົບການຮຽນການສອນ E-Learning | 4.61 | 0.58 | ຫຼາຍທີ່ສຸດ | 4.53 | 0.43 | ຫຼາຍທີ່ສຸດ |
| 2. ການຈັດກິດຈະກຳການຮຽນການສອນ E-Learning | 4.61 | 0.65 | ຫຼາຍທີ່ສຸດ | 4.65 | 0.49 | ຫຼາຍທີ່ສຸດ |
| 3. ຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ | 4.60 | 0.57 | ຫຼາຍທີ່ສຸດ | 4.79 | 0.35 | ຫຼາຍທີ່ສຸດ |
| 4. ດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning | 4.53 | 0.69 | ຫຼາຍທີ່ສຸດ | 4.75 | 0.40 | ຫຼາຍທີ່ສຸດ |
| ຄ່າສະເລ່ຍ | 4.59 | 0.62 | ຫຼາຍທີ່ສຸດ | 4.68 | 0.42 | ຫຼາຍທີ່ສຸດ |
| ຄ່າສະເລ່ຍລວມ | 4.63 | 0.52 | | ຫຼາຍທີ່ສູດ | | |

ຕາຕະລາງທີ 3 ການປຽບທຽບຄວາມແຕກຕ່າງລະຫວ່າງສະພາບປັດຈຸບັນ ແລະ ຄວາມຕ້ອງການຈຳເປັນ ແລະ ຈັດລຳດັບຄວາມສຳຄັນຂອງດັດສະນີຄວາມຕ້ອງການຈຳເປັນໃນການປະຍຸກໃຊ້ E-Learning ເຂົ້າໃນການຮຽນການສອນວິຊາສະຖິຕິສຳລັບການວິໄຈ.

| **ດ້ານທີ** | ສະພາບປັດຈຸບັນ | | | | | | ຄວາມຕ້ອງການຈຳເປັນ | | | | | | T | sig | PNI | ລຳດັບທີ່ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ອາຈານ | | ນັກສຶກສາ | | ສະເລ່ຍ | | ອາຈານ | | ນັກສຶກສາ | | ສະເລ່ຍ | | | | | |
| | $\bar{x}$ | S.D | $\bar{x}$ | S.D | $\bar{x}$ | S.D | $\bar{x}$ | S.D | $\bar{x}$ | S.D | $\bar{x}$ | S.D | | | | |
| 1. ການຈັດລະບົບການຮຽນການສອນ E-Learning | 3.05 | 0.51 | 3.22 | 0.62 | 3.13 | 0.56 | 4.61 | 0.58 | 4.53 | 0.43 | 4.57 | 0.50 | 7.23 | 0.48 | 0.46 | 2 |
| 2. ການຈັດກິດຈະກຳການຮຽນການສອນ E-Learning | 3.38 | 0.62 | 3.17 | 0.73 | 3.27 | 0.67 | 4.61 | 0.65 | 4.65 | 0.49 | 4.63 | 0.57 | 6.10 | 0.37 | 0.41 | 4 |
| 3. ຜົນຂອງການຈັດການຮຽນການສອນ E-Learning ທີ່ສົ່ງຜົນຕໍ່ນັກສຶກສາ | 3.17 | 0.57 | 3.14 | 0.71 | 3.15 | 0.64 | 4.6 | 0.57 | 4.79 | 0.35 | 4.69 | 0.46 | 0.97 | 0.35 | 0.49 | 1 |
| 4. ດ້ານສິ່ງອຳນວຍຄວາມສະດວກໃນການຈັດການຮຽນການສອນແບບ E-Learning | 3.18 | 0.75 | 3.30 | 0.72 | 3.24 | 0.73 | 4.53 | 0.69 | 4.75 | 0.4 | 4.64 | 0.54 | 2.38 | 0.09 | 0.43 | 3 |
| ສະເລ່ຍ | 3.18 | 0.48 | 3.20 | 0.58 | 3.19 | 0.53 | 4.59 | 0.62 | 4.68 | 0.42 | 4.63 | 0.52 | | | | |
| | | | | | | | | | | | ດັດສະນີໂດຍພາບລວມ ($PNI_{Modifies}$) | | | | 0.45 | |